Souphanouvong University Journal of Multidisciplinary Research and Development
2026, Vol. 12, No. 03, 282-288
https://doi.org/10.69692/SUJMRD1203282

Factors Affecting Lao Language Reading Ability of Grade 5 Primary School Students in the Lao PDR

Vandthong Nanthavong[1], Sithan Sukhavong[2], Vixien Thongthavy[3], Phonsavanh Kamkiengyom[4], Phaivone Nunthavong[5], Vannasouk Bouasangthong[6], Bounlaiy Thievmalavong[7]

Department of Lao Language and Literature Education, Faculty of Education, National University of Laos

***[1]Corresponding Author**: Vandthong Nanthavong, Department of Lao Language and Literature Education, Faculty of Education, National University of Laos, Tel: 020 58565757, Email: vandthong2012@gmail.com*

Article Info:
Submitted: July 19, 2026
Revised: August 26, 2026
Accepted: September 29, 2026

Abstract

This research aimed to investigate the level of Lao reading ability among Grade 5 primary school students in the Lao People's Democratic Republic (Lao PDR) and to examine the factors affecting their Lao reading ability. The study employed a quantitative research approach. The target group providing information on the relevant factors consisted of 372 Grade 5 Lao language teachers and school administrators (86.60% were female) from 243 schools across three regions of the country. The participants were selected using purposive sampling. The research instrument was a questionnaire on factors affecting reading ability, using a five-point rating scale. The statistical methods used for data analysis included frequency, percentage, mean (μ), and standard deviation (σ).

The findings revealed that, overall, the factors affecting students' Lao reading ability were at a very high level ($\mu = 3.85$, $\sigma = 0.62$). When considered by individual aspects, the findings were as follows: 1) Student-related factors had the greatest effect and were at a very high level ($\mu = 4.55$, $\sigma = 0.57$), particularly language limitations among students from ethnic minority groups and short attention spans associated with the use of technological media; 2) Family and environmental factors had a high level of effect ($\mu = 3.92$, $\sigma = 0.79$), mainly because parents lacked sufficient time and skills to support reading activities at home; and 3) Teachers' teaching and learning management factors had a very high level of effect ($\mu = 3.68$, $\sigma = 0.62$), as teachers continued to emphasize traditional teaching methods and lacked instructional materials, such as storybooks and language games, that could stimulate students' interest in learning.

Keywords: Reading Factors, Lao Language, Grade 5 Students, Quantitative Research Methodology

1. ພາກສະເໜີ

ການຈັດຕັ້ງປະຕິບັດວຽກງານຕາມແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025) ກຳນົດຄາດໝາຍ, ຜົນໄດ້ຮັບລະດັບສູງ, ຜົນໄດ້ຮັບລະດັບກາງທີ່ຕ້ອງບັນລຸຜົນຢ່າງຊັດເຈນ. ພ້ອມທັງກຳນົດຍຸດທະສາດ ແລະ ວຽກງານຈຸດສຸມທີ່ຕິດພັນກັບຂະແໜງຍ່ອຍຂອງຄູ ໂດຍສະເພາະແມ່ນການພັດທະນາວິຊາຊີບຄູ ແບບຕໍ່ເນື່ອງ ເປັນບຸລິມະສິດຫຼັກຂອງການຊຸກຍູ້ຊ່ວຍເຫຼືອ ແລະ ສະໜັບສະໜຸນຄູໃນການພັດທະນາວິຊາຊີບຄູ, ການພັດທະນາຄຸ່ມື ແລະ ຝຶກອົບຮົມຄູປະຈຳການ, ວຽກງານສຶກສານິເທດສາຍສາມັນສຶກສາ, ການປັບປຸງຫຼັກສູດກໍ່ສ້າງຄູໃຫ້ສອດຄ່ອງກັບຫຼັກສູດສາຍສາມັນ, ການປັບປຸງລະບົບການປະກັນຄຸນນະພາບ ເພື່ອຕອບສະໜອງແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ IX. (Ministry of Education and Sports, 2024).

ການດຳລົງຊີວິດຂອງຄົນເຮົາໃນຍຸກປັດຈຸບັນ ມີການປ່ຽນແປງຕາມກະແສຂອງສັງຄົມໃນຍຸກໂລກາພິວັດ ໂດຍມີເຕັກໂນໂລຊີ ແລະ ນະວັດຕະກຳສະໄໝໃໝ່ເກີດຂຶ້ນຢ່າງວ່ອງໄວ ແລະ ຫຼາກຫຼາຍ ເຊິ່ງສິ່ງຜົນກະທົບໃນທາງກົງ ແລະ ທາງອ້ອມຕໍ່ການປ່ຽນແປງພຶດຕິກຳຂອງຄົນທີ່ຈຳເປັນຕ້ອງປ່ຽນແປງ ແລະ ປັບຕົວໃນການຮຽນຮູ້ເພື່ອການດຳລົງຊີວິດໃນສັງຄົມໃຫ້ທັນຍຸກສະໄໝຢ່າງມີປະສິດທິພາບ. ດັ່ງນັ້ນ, ການສຶກສານັບວ່າເປັນແນວທາງ ຫຼື ເຄື່ອງມືທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມສອດຄ່ອງກັບສະພາບຂອງສັງຄົມໃນປັດຈຸບັນ ແລະ ການພັດທະນາຄູ ຈຶ່ງເປັນສິ່ງໜຶ່ງສຳຄັນໃນການພັດທະນາຄຸນນະພາບການສຶກສາ ສອດຄ່ອງກັບເປົ້າໝາຍວິໄສທັດ ແລະ ແຜນຍຸດທະສາດການພັດທະນາການສຶກສາເຖິງປີ 2030 ທີ່ ລັດຖະບານ ສປປ ລາວໄດ້ລະບຸໄວ້ຄື ຮອດປີ 2030 ພົນລະເມືອງລາວທຸກຄົນຕ້ອງໄດ້ຮັບການສຶກສາທີ່ມີຄຸນນະພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບແຂງແຮງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບ ເພື່ອພັດທະນາປະເທດຊາດໃຫ້ຍືນຍົງ ສາມາດເຊື່ອມໂຍງ ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້. Vathanavong et

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

al. (2021) ໄດ້ກ່າວວ່າ ການພັດທະນາແບບຍືນຍົງເປົ້າໝາຍທີ 4 ຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມກັນ ແລະ ທົ່ວເຖິງ, ສົ່ງເສີມກາລະໂອກາດໃນການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນວ່າ ພາຍໃນປີ 2030 ຕ້ອງຮັບປະກັນວ່າເດັກນ້ອຍຍິງ ແລະ ຊາຍທັງໝົດສຳເລັດການສຶກສາຂັ້ນປະຖົມ ແລະ ມັດທະຍົມໂດຍບໍ່ເສຍຄ່າ, ມີຄວາມເທົ່າທຽມກັນ ແລະ ມີຄຸນນະພາບ ນຳໄປສູ່ໝາກຜົນຂອງການຮຽນຮູ້ທີ່ມີປະສິດທິຜົນ ແລະ ເໝາະສົມ; ນັກຮຽນທັງໝົດມີຄວາມຮູ້ ແລະ ທັກສະທີ່ຈຳເປັນເພື່ອສົ່ງເສີມການພັດທະນາແບບຍືນຍົງ. ໃນນັ້ນ, ລວມທັງຜ່ານການສຶກສາເພື່ອການພັດທະນາແບບຍືນຍົງ ແລະ ການດຳລົງຊີວິດແບບຍືນຍົງ, ສິດທິມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສົ່ງເສີມວັດທະນະທຳ ແຫ່ງສັນຕິພາບ ແລະ ການບໍ່ໃຊ້ຄວາມຮຸນແຮງ, ການເປັນພົນລະເມືອງຂອງໂລກ ແລະ ການຊື່ນຊົມຄວາມຫຼາກຫຼາຍທາງດ້ານວັດທະນະທຳ ກໍຄືການປະກອບສ່ວນຂອງວັດທະນະທຳເຂົ້າໃນການພັດທະນາແບບຍືນຍົງ, ເພີ່ມທະວີການສະໜອງຈຳນວນຄູອາຈານທີ່ມີຄຸນນະພາບໃຫ້ຫຼາຍຂຶ້ນລວມທັງຜ່ານການຮ່ວມມືສາກົນສຳລັບການຝຶກອົບຮົມຄູຢູ່ໃນປະເທດກຳລັງພັດທະນາ ໂດຍສະເພາະປະເທດດ້ອຍພັດທະນາ ແລະ ປະເທດເກາະດອນດ້ອຍກຳລັງພັດທະນາ (United Nations in Lao PDR, 2017).

ໃນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ລັດຖະບານໄດ້ເນັ້ນຫຼາຍປະເດັນສຳຄັນຕໍ່ການພັດທະນາປະເທດ ເຊັ່ນ: ວຽກງານການສ້າງຄວາມສາມັກຄີພາຍໃນຊາດ, ການສ້າງຄວາມສະຖຽນລະພາບທາງດ້ານການເມືອງ ແລະ ການຫັນປ່ຽນການພັດທະນາເສດຖະກິດ-ສັງຄົມໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ ເພື່ອເປັນການຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ ແລະ ເພື່ອຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (Office of the Central Committee of the Party, 2021). ເຖິງຢ່າງໃດກໍຕາມ, ເພື່ອໃຫ້ບັນລຸເປົ້າໝາຍທີ່ຕັ້ງໄວ້ນັ້ນ ໜຶ່ງໃນບັນດາວຽກບຸລິມະສິດພັດທະນາກໍຄືການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ເພື່ອເປັນປັດໄຈສຳຄັນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຕາມແຕ່ລະໄລຍະ Office of the Central Committee of the Party, (2021) ເມື່ອເຫັນໄດ້ເຖິງຄວາມສຳຄັນຂອງການພັດທະນາຊັບພະກອນມະນຸດ, ລັດຖະບານຈຶ່ງໄດ້ອອກດຳລັດວ່າດ້ວຍການປະກາດ ແລະ ນຳໃຊ້ຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ກຳໜົດວິໄສທັດຮອດປີ 2030 ໂດຍລະບຸວ່າ “ພັດທະນາຊັບພະຍາກອນມະນຸດໃຫ້ເປັນກຳລັງການຜະລິດຕົ້ນຕໍທີ່ສາມາດຕອບສະໜອງຕໍ່ການພັດທະນາເສດຖະກິດ-ສັງຄົມຢ່າງຍືນຍົງ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ” (National Assembly, 2016). ເພື່ອບັນລຸຍຸດທະສາດທີ່ວາງໄວ້ ລັດຖະບານມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ໃນນການຊຸກຍູ້, ສົ່ງເສີມພະນັກງານ-ລັດຖະກອນໃຫ້ມີຄວາມເຂັ້ມແຂງໃນດ້ານວິຊາສະເພາະ, ຄວາມຮູ້-ຄວາມສາມາດທາງດ້ານການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ລວມທັງຄວາມຮູ້ທາງດ້ານພາສາຕ່າງປະເທດ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໄປພ້ອມກັບການປັບປຸງຫຼັກສູດ, ນິຕິກຳ ແລະ ລະບົບການຄຸ້ມຄອງພະນັກງານໃຫ້ມີຄວາມຖືກຕ້ອງຊັດ (National Assembly, 2016).

ໃນປັດຈຸບັນການຮຽນພາສາລາວເປັນປັດໄຈສຳຄັນທີ່ນັກຮຽນຊັ້ນປະຖົມຕ້ອງໄດ້ເຂົ້າໃຈ ແລະ ມີຄວາມຈຳເປັນທີ່ຕ້ອງຮຽນຮູ້ເພາະວ່າ ພາສາລາວ ແມ່ນພາສາແຫ່ງຊາດທີ່ມີຄວາມສຳຄັນສຳລັບທຸກວຽກງານ ເຊັ່ນ: ນຳໃຊ້ເປັນເຄື່ອງມືໃນການຕິດຕໍ່ສື່ສານ, ບັນທຶກຈົດຈຳ ແລະ ສິດສອນສິ່ງຄວາມຮູ້, ປະສົບການ, ອົດຄອງປະເພນີ ແລະ ວັດທະນະທຳ, ການຮຽນພາສາລາວໃນຊັ້ນປະຖົມສຶກສາແມ່ນການຮຽນຄວາມຮູ້ດ້ານພາສາ,ເຮັດໃຫ້ເກີດຄວາມມ່ວນຊື່ນ ແລະ ຮູ້ຈັກຄົ້ນຄິດພິຈາລະນາ ໂດຍຜ່ານການຟັງ, ການເວົ້າ, ການອ່ານ ແລະ ການຂຽນ, ພັດທະນາຄວາມຮູ້ຂອງນັກຮຽນກ່ຽວກັບໜ້າທີ່ ແລະ ການພົວພັນທາງພາສາ ລະຫວ່າງພາສາທີ່ໃຊ້ໃນບົດຮຽນກັບພາສາທີ່ນຳໃຊ້ໃສ່ງຄົມ ເພື່ອໃຫ້ນັກຮຽນກາຍເປັນຜູ້ທີ່ມີຄວາມສາມາດໃນການຄົ້ນຄິດພິຈາລະນາ ວິເຄາະ-ວິຈານ ແລະ ມີຫົວຄິດປະດິດສ້າງໃນການນຳໃຊ້ພາສາລາວ, ມີຄວາມຮູ້,ທັກສະ, ຄວາມເຂົ້າໃຈກ່ຽວກັບພາສາລາວ ແລະ ການອ່ານອອກຂຽນໄດ້ ແມ່ນຄວາມຈຳເປັນເພື່ອຄວາມກ້າວໜ້າໃນການຮຽນ ແລະ ການດຳລົງຊີວິດໃນຊຸມຊົນ. ດັ່ງນັ້ນ, ວິຊາພາສາລາວຕ້ອງກະກຽມໃຫ້ນັກຮຽນມີທັກສະໃນການນຳໃຊ້ພາສາເຂົ້າໃນການຮຽນ, ການເຮັດວຽກງານ ແລະ ການດຳລົງຊີວິດປະຈຳວັນ (Ministry of Education and Sports, 2010).

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX *(*2021-2025*)* ພາກທີ I (ຂໍ້ 3) ໃຫ້ລາຍລະອຽດກ່ຽວກັບສິ່ງທ້າທາຍສຳລັບຊັ້ນປະຖົມສຶກສາ. ບຸລິມະສິດທີ່ສຳຄັນສຳລັບຂະແໜງການຍ່ອຍປະຖົມແມ່ນເພື່ອຮັບປະກັນໃຫ້ນັກຮຽນທີ່ຮຽນຊັ້ນປະຖົມທຸກຄົນລວມທັງຜູ້ທີ່ບໍ່ໄດ້ໃຊ້ພາສາລາວແມ່ນໃຫ້ສາມາດອ່ານອອກຂຽນໄດ້ ແລະ ຄິດໄລ່ເລກເປັນ. ຍັງມີຊ່ອງວ່າງທາງເພດເຊິ່ງເຫັນວ່າເດັກຍິງຮຽນໄດ້ດີກວ່າເດັກຊາຍຕາມຕົວຊີ້ວັດຫຼາຍຕົວ, ເຖິງແມ່ນວ່າຍັງບໍ່ທັນມີສິ່ງອ້າງອີງທີ່ຈະແຈ້ງວ່າເປັນຍ້ອນເຫດຜົນຫຍັງ ແລະຕ້ອງມີການສຶກສາເພີ້ມເຕີມກ່ຽວກັບເລື່ອງນີ້. ດັ່ງນັ້ນຈຶ່ງເຮັດໃຫ້ດັດສະນີຄວາມສະເໝີພາບຍິງ-ຊາຍ ສຳລັບການເຂົ້າຮຽນຮອດຊັ້ນ ປ.5 ແມ່ນເທົ່າທຽມກັນໄດ້ (Ministry of Education and Sports, 2021). ພ້ອມດຽວກັນນັ້ນ ຈາກຜົນການທົບທວນກາງສະໄໝໄດ້ສະແດງໃຫ້ເຫັນວ່າຜົນການຮຽນວິຊາພາສາລາວ ແລະ ຄະນິດສາດຕ່ຳ ໂດຍ ອີງໃສ່ຜົນການປະເມີນຜົນການຮຽນຂອງນັກຮຽນ ປ.3 ໃນປີ 2017, ມ.4 ໃນປີ 2019 ແລະ ການສຶກສາຂອງ ທະນາຄານໂລກໃນປີ 2016 ກໍ່ໄດ້ພົບວ່າ ຄູປະຖົມມີຄວາມຮູ້ພຽງແຕ່ປະມານເຄິ່ງໜຶ່ງຂອງເນື້ອໃນບົດຮຽນທີ່ພວກເຂົາສອນ.

ເກືອບເຄິ່ງໜຶ່ງຂອງນັກຮຽນຊັ້ນ ປ.5 ຂອງ ສປປ. ລາວ (50%) ທີ່ມີຄະແນນຕ່ຳກວ່າ 274 ປະຕິບັດໄດ້ຢູ່ໃນລະດັບທີ 2 ລົງມາຂອງລະດັບຄວາມຮູ້ຄວາມສາມາດໃນການອ່ານ, ເຊິ່ງເປັນລະດັບຕ່ຳສຸດຂອງການອ່ານ. ນັກຮຽນຢູ່ ໃນລະດັບນີ້ ໂດຍທົ່ວໄປແລ້ວແມ່ນສາມາດຈັບຄູ່ໜຶ່ງ ໃນສີ່ຄຳທີ່ໃຫ້ມາພ້ອມກັບຮູບຂອງວັດຖຸ, ສະຖານທີ່ ຫຼື ສັນຍະລັກ ທີ່ຄຸ້ນເຄີຍ, ເຊິ່ງວ່າໜ້າວຽກແມ່ນງ່າຍ, ກົງໄປກົງມາ ແລະ ສະແດງຊ້ຳຄືນຫຼາຍຄັ້ງ. ສາມາດເບິ່ງຕົວຢ່າງຂອງຂໍ້ສອບການ ອ່ານສຳລັບຄະແນນລະດັບທີ 2. ຜົນການປະເມີນນີ້ຊີ້ໃຫ້ເຫັນວ່າປະມານເຄິ່ງໜຶ່ງຂອງນັກຮຽນຊັ້ນ ປ.5 ຂອງລາວສາມາດຮັບຮູ້ພຽງແຕ່ຄຳສັບດ່ຽວທີ່ຄຸ້ນເຄີຍ ແລະ ຍັງບໍ່ທັນພັດທະນາທັກສະພື້ນຖານທີ່ຈຳ ເປັນເພື່ອກາຍເປັນຜູ້ອ່ານທີ່ມີຄວາມສາມາດ (Lao PDR MoES & UNICEF, 2022).

ສ່ວນດ້ານການຂຽນຂອງນັກຮຽນ ປ.5 ເຫັນວ່າ ຢູ່ອັນດັບ 1 ຄະແນນຕ່ຳກວ່າ 287 ກວມເອົາ 50% ອາດຈະສາມາດສ້າງປະໂຫຍກຈຳນວນໜ້ອຍໜຶ່ງ ແລະ ມີເນື້ອໃນຈຳກັດທີ່ສຸດ ເຊັ່ນ ເວລາພັນລະນາຮູບພາບໃດໜຶ່ງ, ນັກຮຽນຈະສຸມໃສ່ບາງລັກສະນະທີ່ບໍ່ສຳພັນກັນ ຫຼື ນຳສະເໜີ ຄວາມຄິດແບບລວມໆທົ່ວໄປ. ເຂົາເຈົ້າສາມາດສ້າງປະໂຫຍກຄຳສັ່ງໄດ້ ແຕ່ບໍ່ສອດຄ່ອງກັນ. ຄວາມຮູ້ກ່ຽວກັບຄຳສັບຂອງນັກຮຽນໃນລະດັບນີ້ ບໍ່ພຽງພໍສຳລັບພັນລະນາຮູບພາບໃດໜຶ່ງໄດ້, ຄຳສັບທີ່ໃຊ້ຊ້ຳຄືນຫຼາຍຄັ້ງ.

ດັ່ງນັ້ນ, ທີມງານຄົ້ນຄວ້າເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນເພື່ອຊອກຫາສາເຫດວ່າເປັນຫຍັງຄວາມສາມາດດ້ານການອ່ານພາສາລາວຂອງນັກຮຽນຈຶ່ງຕ່ຳ. ເພາະສະນັ້ນ, ຄູຄວນມີການພັດທະນາທັກສະດ້ານການສອນການອ່ານ ແລະ ນັກຮຽນຄວນຈະມີທັກສະໃນການອ່ານພາສາລາວທີ່ເໝາະສົມ ຖ້າບໍ່ດັ່ງນັ້ນອາດຈະກໍ່ໃຫ້ເກີດຜົນເສຍຂຶ້ນໃນອະນາຄົດຕໍ່ການພັດທະນາຕໍ່ຕົນເອງ ແລະ ປະເທດຊາດ. ເພື່ອຢາກໃຫ້ປະສົບຜົນສຳເລັດດ້ານທັກສະການອ່ານ ແລະ ການຂຽນຂອງນັກຮຽນຊັ້ນ ປ.5 ມີລະດັບໃຫ້ດີຂຶ້ນ ທີມງານຄົ້ນຄວ້າ ຈຶ່ງມີຄວາມສົນໃຈສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວຂອງນັກຮຽນຊັ້ນປະຖົມ ຢູ່ ສປປ.ລາວ.

ສະນັ້ນ, ຈຶ່ງກຳນົດຈຸດປະສົງເພື່ອສຶກສາ ປັດໄຈສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ຢູ່ ສປປ ລາວ.

2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ ເປັນການວິໄຈແບບປະລິມານ (Quantitative Research) ເພື່ອໃຫ້ໄດ້ຂໍ້ມູນທີ່ກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 (ປ.5) ຢູ່ ສປປ ລາວ. ໂດຍມີລະບຽບວິທີການດັ່ງນີ້:

2.1 ການອອກແບບການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ໄດ້ເລືອກນຳໃຊ້ຮູບແບບການວິໄຈແບບປະລິມານເພື່ອສຳຫຼວດ ແລະ ວັດຄ່າລະດັບຄວາມຄິດເຫັນຂອງຄູສອນ ແລະ ຜູ້ບໍລິຫານໂຮງຮຽນ ຕໍ່ກັບປັດໄຈດ້ານຕ່າງໆ (ປັດໄຈນັກຮຽນ, ປັດໄຈພາຍໃນ (ໂຮງຮຽນ), ປັດໄຈພາຍນອກ) ທີ່ສົ່ງຜົນຕໍ່ການອ່ານໂດຍນຳໃຊ້ແບບສອບຖາມມາດຕາສ່ວນປະເມີນຄ່າ 5 ລະດັບ (Likert Scale**)** ເກັບຂໍ້ມູນຈາກກຸ່ມຕົວຢ່າງຈຳນວນ 372 ທ່ານ ຈາກ 243 ໂຮງຮຽນ ແລະ ນຳໃຊ້ສະຖິຕິພັນລະນາ ເຊັ່ນ ຄ່າສະເລ່ຍ (***μ*)** ແລະ ຄ່າຜັນປ່ຽນມາດຕະຖານ (σ**).**

2.2 ກຸ່ມເປົ້າໝາຍໃນການຄົ້ນຄວ້າ

ການສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 (ປ.5) ຢູ່ ສປປ ລາວ ໃຫ້ມີຄວາມຄອບຄຸມ ແລະ ເປັນຕົວແທນຂອງລະບົບການສຶກສາ, ຜູ້ຄົ້ນຄວ້າໄດ້ກຳນົດປະຊາກອນ ແລະ ກຸ່ມຕົວຢ່າງໂດຍແຍກຕາມຮູບແບບການວິໄຈປະສົມປະສານ ດັ່ງນີ້:

- ກຸ່ມເປົ້າໝາຍ ຜູ້ຄົ້ນຄວ້າໄດ້ນຳໃຊ້ວິທີການຄັດເລືອກແບບສະເພາະເຈາະຈົງ (Purposive Sampling) ໂດຍກຳນົດ ກຸ່ມຜູ້ຕອບແບບສອບຖາມກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການອ່ານ ຈຳນວນທັງໝົດ 372 ທ່ານ ເຊິ່ງແມ່ນຄູສອນພາສາລາວໃນໂຮງຮຽນຊັ້ນປະຖົມສຶກສາ ໃນ 3 ພາກ (ພາກເໜືອ, ພາກກາງ ແລະ ພາກໃຕ້)

2.3 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າໃນຄັ້ງນີ້ແມ່ນແບບສອບຖາມແບ່ງອອກເປັນ 2 ພາກສ່ວນ ຄື:

ພາກສ່ວນທີ 1: ຂໍ້ຄຳຖາມກ່ຽວກັບຂໍ້ມູນທົ່ວໄປ (ເພດ, ອາຍຸ, ລະດັບການສຶກສາ, ຕຳແໜ່ງ ແລະ ປະສົບການການເຮັດວຽກ).

ພາກສ່ວນທີ 2: ຄຳຖາມກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວ ມີລັກສະນະເປັນມາດຕາສ່ວນປະເມີນຄ່າ 5 ລະດັບ (Likert's Five-Point Rating Scale) ຄື: ຫຼາຍທີ່ສຸດ, ຫຼາຍ, ປານກາງ, ໜ້ອຍ ແລະ ໜ້ອຍທີ່ສຸດ ໂດຍແບ່ງອອກເປັນ 3 ດ້ານຫຼັກ ດັ່ງນີ້: (1). ປັດໄຈຜູ້ຮຽນ (ນັກຮຽນ), (2). ປັດໄຈພາຍໃນ (ໂຮງຮຽນ: ຜູ້ບໍລິຫານ, ຄູສອນ, ສື່ການສອນ, ຂະບວນການຈັດການຮຽນ-ການສອນ ແລະ ສະພາບແວດລ້ອມໂຮງຮຽນ) ແລະ (3). ປັດໄຈພາຍນອກ (ຄອບຄົວ, ເສດຖະກິດ, ສັງຄົມ, ເຕັກໂນໂລຊີ)

2.4 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

ຂັ້ນຕອນໃນການສ້າງເຄື່ອງມື ໄດ້ສ້າງຕາມຂັ້ນຕອນດັ່ງນີ້:

1. ການສຶກສາເອກະສານ: ສຶກສາທິດສະດີແຮງຈູງໃຈ, ແນວຄິດການຈັດການຮຽນ-ການສອນ ແລະ ບົດວິໄຈທີ່ກ່ຽວຂ້ອງກັບປັດໄຈທີ່ສົ່ງຜົນຕໍ່ການອ່ານ ເພື່ອກຳນົດກອບແນວຄິດ ແລະ ສ້າງຂໍ້ຄຳຖາມໃຫ້ຄອບຄຸມ 3 ດ້ານ (ປັດໄຈຜູ້ຮຽນ, ປັດໄຈພາຍໃນ (ໂຮງຮຽນ), ປັດໄຈພາຍນອກ**).**

2. ການກວດສອບຄວາມທ່ຽງກົງດ້ານເນື້ອໃນ (Content Validity): ນຳຮ່າງແບບສອບຖາມໄປສະເໜີຕໍ່ຄະນະຜູ້ຊ່ຽວຊານ ຈຳນວນ 5 ທ່ານ ເພື່ອກວດສອບຄວາມສອດຄ່ອງລະຫວ່າງຂໍ້ຄຳຖາມກັບຈຸດປະສົງ ແລະ ເນື້ອໃນ ໂດຍນຳມາຄິດໄລ່ຫາຄ່າດັດສະນີຄວາມສອດຄ່ອງ (Index of Item-Objective Congruence: IOC). ຜົນການວິເຄາະພົບວ່າ ຂໍ້ຄຳຖາມທັງໝົດມີຄ່າ IOC ຢູ່ລະດັບ 0.60 ຫາ 1.00 (ເຊິ່ງສູງກວ່າເກນ 0.50) ສະແດງວ່າຄຳຖາມມີຄວາມທ່ຽງກົງດ້ານເນື້ອໃນ ແລະ ສາມາດນຳໄປໃຊ້ໄດ້.

3. ການທົດລອງໃຊ້ (Try-out) ແລະ ຫາຄ່າຄວາມເຊື່ອໝັ້ນ ນຳແບບສອບຖາມທີ່ປັບປຸງແລ້ວໄປທົດລອງໃຊ້ກັບຄູສອນ ແລະ ຜູ້ບໍລິຫານໂຮງຮຽນ ທີ່ບໍ່ແມ່ນກຸ່ມຕົວຢ່າງ ຈຳນວນ 30 ທ່ານ ເພື່ອຊອກຫາຄ່າຄວາມເຊື່ອໝັ້ນ (Reliability) ໂດຍນຳໃຊ້ວິທີຫາຄ່າສຳປະສິດອານຟາຂອງຄຣອນບັກ (Cronbach's Alpha Coefficient). ຜົນການວິເຄາະພົບວ່າ ແບບສອບຖາມທັງສະບັບມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.89 (ເຊິ່ງສູງກວ່າເກນ 0.70) ສະແດງວ່າເຄື່ອງມືມີຄວາມເຊື່ອໝັ້ນສູງ ພ້ອມທີ່ຈະນຳໄປເກັບຂໍ້ມູນຕົວຈິງ.

2.5 ວິທີຮວບຮວມຂໍ້ມູນ

ໃນການເກັບກຳຂໍ້ມູນເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວ, ທີມງານຄົ້ນຄວ້າໄດ້ດຳເນີນການລວບລວມຂໍ້ມູນ ໂດຍມີຂັ້ນຕອນດັ່ງນີ້:

- ປະສານງານ ແລະ ຂໍອະນຸຍາດ: ທີມງານຄົ້ນຄວ້າໄດ້ນຳໜັງສືສະເໜີທາງການຈາກຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ເພື່ອປະສານງານໄປຫາ ພະແນກສຶກສາທິການ ແລະ ກິລາແຂວງ (ພສຂ) 9 ແຂວງ ແລະ ຫ້ອງການສຶກສາ ແລະ ກິລາເມືອງ (ຫສມ) 27 ເມືອງ ທີ່ເປັນພື້ນທີ່ເປົ້າໝາຍ.
- ລວບລວມຂໍ້ມູນ ແບບສອບຖາມ ທີມງານຄົ້ນຄວ້າໄດ້ລົງໂຮງຮຽນກຸ່ມເປົ້າໝາຍເພື່ອແຈກຢາຍແບບສອບຖາມປັດໄຈດ້ວຍຕົນເອງໃນ ໂຮງຮຽນຊັ້ນປະຖົມສຶກສາ ຈຳນວນ 243 ແຫ່ງ.
- ດຳເນີນການເກັບແບບສອບຖາມທັງໝົດ ຈຳນວນ 372 ຊຸດ ເຊິ່ງໄດ້ຮັບຄືນມາຄົບຖ້ວນ (ຄິດເປັນ 100%) ແລະ ໄດ້ຜ່ານການກວດສອບຄວາມສົມບູນຂອງການຕອບກ່ອນນຳວິເຄາະຂໍ້ມູນ.

2.6 ການວິເຄາະຂໍ້ມູນ

ວິເຄາະຂໍ້ມູນຈາກແບບສອບຖາມປັດໄຈ 5 ລະດັບ ໄດ້ຖືກນຳມາປະມວນຜົນດ້ວຍໂປຣແກຣມກຳເລັດຮູບທາງສະຖິຕິ ໂດຍນຳໃຊ້ສະຖິຕິພັນລະນາ (Descriptive Statistics) ເຊັ່ນ ສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ໃນຈຸດປະສົງທີ 1 ແລະ ຈຸດປະສົງທີ 2 ແມ່ນໃຊ້ສະຖິຕິແບບພັນລະນາ ເຊັ່ນ ສົມຜົນແບບທົດຖອຍ (Multiple Regression)

1. ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມວິເຄາະຫາຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage).

2. ລະດັບການສົ່ງຜົນຂອງປັດໄຈ: ວິເຄາະຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານທັງໃນແບບລວມ ແລະ ແຍກເປັນລາຍດ້ານ (Best,1977) (ປັດໄຈຜູ້ຮຽນ, ປັດໄຈພາຍໃນ (ໂຮງຮຽນ), ປັດໄຈພາຍນອກ) ແລ້ວນຳມາແປຜົນຕາມເກນດັ່ງນີ້:

- ຄ່າສະເລ່ຍ 4.51 – 5.00 ໝາຍເຖິງ ສົ່ງຜົນໃນລະດັບຫຼາຍທີ່ສຸດ
- ຄ່າສະເລ່ຍ 3.51 – 4.50 ໝາຍເຖິງ ສົ່ງຜົນໃນລະດັບຫຼາຍ
- ຄ່າສະເລ່ຍ 2.51 – 3.50 ໝາຍເຖິງ ສົ່ງຜົນໃນລະດັບປານກາງ
- ຄ່າສະເລ່ຍ 1.51 – 2.50 ໝາຍເຖິງ ສົ່ງຜົນໃນລະດັບໜ້ອຍ
- ຄ່າສະເລ່ຍ 1.00 – 1.50 ໝາຍເຖິງ ສົ່ງຜົນໃນລະດັບໜ້ອຍທີ່ສຸດ

3. ຜົນໄດ້ຮັບ

3.1 ປັດໄຈສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ຢຸ່ ສປປ ລາວ

ຜົນການວິເຄາະຂໍ້ມູນປັດໄຈສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ຢຸ່ ສປປ ລາວ. ຂອງກຸ່ມເປົ້າໝາຍຈຳນວນ 372 ຄົນ ໂດຍແບ່ງອອກເປັນ 3 ດ້ານຫຼັກ ພົບວ່າ

1. ຜົນການວິເຄາະປັດໄຈດ້ານຜູ້ຮຽນ

ຜົນການວິເຄາະຂໍ້ມູນປັດໄຈດ້ານຜູ້ຮຽນ ພົບວ່າຢູ່ໃນລະດັບຫຼາຍ (μ=3.92, σ=0.74); ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດ ແມ່ນ ນັກຮຽນເປັນຄົນທີ່ມີສຸຂະພາບກາຍທີ່ດີ ແລະ ມີຄວາມພ້ອມໃນການຮຽນ ຢູ່ໃນລະດັບຫຼາຍ ຄ່າສະເລ່ຍເທົ່າກັບ 4.36 (σ = 0.66), ຮອງລົງມາແມ່ນ ນັກຮຽນເປັນຄົນທີ່ມີສຸຂະພາບໃຈທີ່ດີ ແລະ ມີຄວາມພ້ອມໃນການຮຽນ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.27 (σ = 0.68) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ນັກຮຽນອ່ານພາສາລາວໄດ້ຄ່ອງແຄ່ວ ມີຄ່າສະເລ່ຍເທົ່າກັບ 3.44 (σ = 0.73) ເຊິ່ງແປຜົນຢູ່ໃນລະດັບຫຼາຍ.

2. ຜົນການວິເຄາະປັດໄຈພາຍໃນ

ຜົນການວິເຄາະຂໍ້ມູນປັດໄຈພາຍໃນ ພົບວ່າໃນພາບລວມຢູ່ໃນລະດັບຫຼາຍ (μ=4.35, σ=.74), ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດ: ແມ່ນ ຄູມີຄວາມກະຕືລືລົ້ນໃນການສອນ ແລະ ສອນດ້ວຍຄວາມຮັບຜິດຊອບສູງ ຢູ່ໃນລະດັບຫຼາຍທີ່ສຸດ (, μ=4.82, σ=.66), ຮອງລົງມາແມ່ນຄູເປັນແບບຢ່າງທີ່ດີແກ່ນັກຮຽນ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍເທົ່າກັບ 4.75 (σ = 0.48). ສ່ວນຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ມີສື່ການຮຽນ-ການສອນເຊັ່ນ: LCD, ຄອມພິວ

ເຕ, ເຄື່ອງຫຼິ້ນ CD ແລະ ຮູບພາບປະກອບການສອນຄົບຖ້ວນ ຢູ່ໃນລະດັບ ປານກາງ ມີຄ່າສະເລ່ຍເທົ່າກັບ 3.16 ($\sigma = 1.15$).

3. ຜົນການວິເຄາະປັດໄຈພາຍນອກ

ຜົນການວິເຄາະຂໍ້ມູນປັດໄຈພາຍນອກ ພົບວ່າໃນພາບລວມ ມີຄ່າສະເລ່ຍລວມເທົ່າກັບ 3.85 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.95 ເຊິ່ງແປຜົນຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດ ແມ່ນ ຄອບຄົວໃຫ້ກຳລັງໃຈນ້ອງໃນການຮຽນສະເໝີ ໂດຍມີຄ່າສະເລ່ຍເທົ່າກັບ 4.17 ($\sigma = 0.75$) ຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນ ຄອບຄົວເຫັນຄວາມສຳຄັນຂອງການຮຽນພາສາລາວ ມີຄ່າສະເລ່ຍເທົ່າກັບ 4.14 ($\sigma = 0.79$) ຢູ່ໃນລະດັບຫຼາຍ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ຮ້ານບັ໊ມເທິງ, ຮ້ານເກມ ແລະ ອື່ນໆ ອ້ອມຂ້າງໂຮງຮຽນທີ່ມີຜົນຕໍ່ການຮຽນ ມີຄ່າສະເລ່ຍເທົ່າກັບ 3.16 ($\sigma = 1.45$) ເຊິ່ງແປຜົນຢູ່ໃນລະດັບ ປານກາງ.

ຕາຕະລາງ 1 ສະຫຼຸບຜົນການວິເຄາະທັງ 3 ດ້ານ

ດ້ານ	ຈຳນວນ	ຄ່າສະເລ່ຍ	ຄ່າຜັນປ່ຽນມາດຕະຖານ	ແປຜົນ
ປັດໄຈດ້ານຜູ້ຮຽນ	372	3.92	0.56	ຫຼາຍ
ປັດໄຈພາຍໃນ	372	4.35	0.40	ຫຼາຍ
ປັດໄຈພາຍນອກ	372	3.85	0.57	ຫຼາຍ
ລວມ	**372**	**4.04**	**0.43**	**ຫຼາຍ**

ຈາກຕາຕະລາງ 1 ພົບວ່າ: ຜົນການວິເຄາະຂໍ້ມູນປັດໄຈທີ່ສົ່ງຜົນຕໍ່ການຮຽນ-ການສອນ ຂອງກຸ່ມເປົ້າໝາຍຈຳນວນ 372 ຄົນ ໃນພາບລວມທັງ 3 ດ້ານ ມີຄ່າສະເລ່ຍລວມເທົ່າກັບ 4.04 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.43 ເຊິ່ງແປຜົນຢູ່ໃນລະດັບ ຫຼາຍ. ເມື່ອພິຈາລະນາແຍກອອກເປັນແຕ່ລະດ້ານມີລາຍລະອຽດດັ່ງນີ້:

ດ້ານປັດໄຈພາຍໃນ ມີຄ່າສະເລ່ຍສູງທີ່ສຸດ ໂດຍມີຄ່າສະເລ່ຍເທົ່າກັບ 4.35 ($\sigma = 0.40$) ເຊິ່ງແປຜົນຢູ່ໃນລະດັບ ຫຼາຍ.

ດ້ານປັດໄຈດ້ານຜູ້ຮຽນມີຄ່າສະເລ່ຍຮອງລົງມາ ໂດຍມີຄ່າສະເລ່ຍເທົ່າກັບ 3.92 ($\sigma = 0.56$) ເຊິ່ງແປຜົນຢູ່ໃນລະດັບ ຫຼາຍ.

ດ້ານປັດໄຈພາຍນອກມີຄ່າສະເລ່ຍໜ້ອຍທີ່ສຸດ ໂດຍມີຄ່າສະເລ່ຍເທົ່າກັບ 3.85 ($\sigma = 0.57$) ແຕ່ຢູ່ໃນລະດັບ ຫຼາຍ ເຊັ່ນດຽວກັນ.

4. ວິພາກຜົນ

ຜົນການວິເຄາະປັດໄຈສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ຢູ່ ສປປ ລາວ ໃນພາບລວມທັງ 3 ດ້ານ ພົບວ່າ ປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ຢູ່ ສປປ ລາວ ມີຄ່າສະເລ່ຍລວມຢູ່ໃນລະດັບຫຼາຍ ($\mu = 4.04, \sigma = 0.43$) ເມື່ອພິຈາລະນາຈຳແນກ ແລະ ວິພາກຜົນຕາມໂຄງສ້າງປັດໄຈດ້ານຕົວຜູ້ຮຽນ, ປັດໄຈພາຍໃນ (ໂຮງຮຽນ) ແລະ ປັດໄຈພາຍນອກ (ຄອບຄົວ ແລະ ສະພາບແວດລ້ອມ) ສາມາດອະທິບາຍໄດ້ວ່າ

1) ປັດໄຈດ້ານຜູ້ຮຽນມີຄ່າສະເລ່ຍຮອງລົງມາ ($\mu = 3.92, \sigma = 0.56$) ສົ່ງຜົນໃນລະດັບຫຼາຍ. ຂໍ້ທີ່ມີຄ່າສະເລ່ຍສູງສຸດ ແມ່ນ ນັກຮຽນເປັນຄົນທີ່ມີສຸຂະພາບກາຍທີ່ດີ ແລະ ມີຄວາມພ້ອມໃນການຮຽນ ($\mu = 4.36, \sigma = 0.66$) ແລະ ມີສຸຂະພາບໃຈທີ່ດີ ($\mu = 4.27, \sigma = 0.68$). ສິ່ງນີ້ໃຫ້ເຫັນວ່າ ນັກຮຽນ ປ.5 ສ່ວນໃຫຍ່ມີຄວາມພ້ອມດ້ານຊີວະວິທະຍາ ແລະ ຈິດວິທະຍາຂັ້ນພື້ນຖານ ທີ່ເອື້ອອຳນວຍຕໍ່ການຮຽນຮູ້ ເຊິ່ງສອດຄ່ອງກັບ ທິດສະດີຄວາມຕ້ອງການພື້ນຖານຂອງ Maslow, (1954) ທີ່ວ່າ ເມື່ອຄວາມຕ້ອງການດ້ານຮ່າງກາຍ (Physiological) ແລະ ຄວາມໝັ້ນຄົງທາງໃຈ (Safety/Love) ໄດ້ຮັບການຕອບສະໜອງ, ບຸກຄົນກໍຈະພ້ອມທີ່ຈະກ້າວໄປສູ່ຂັ້ນການຮຽນຮູ້ ແລະ ພັດທະນາຕົນເອງ, ເຖິງຢ່າງໃດກໍຕາມ, ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດໃນດ້ານນີ້ຄື ນັກຮຽນອ່ານພາສາລາວໄດ້ຄ່ອງແຄ່ວ" ($\mu = 3.44, \sigma = 0.73$). ນີ້ຄືບັນຫາ ແລະ ຂໍ້ຄົ້ນຄວ້າທີ່ສຳຄັນທີ່ສຸດ ເພາະເຖິງວ່າເດັກຈະມີສຸຂະພາບກາຍ-ໃຈທີ່ດີ ແຕ່ລະດັບຄວາມຄ່ອງແຄ່ວໃນການອ່ານຍັງຕ່ຳກວ່າດ້ານອື່ນໆ. ໝາກຜົນນີ້ສາມາດອະທິບາຍໄດ້ດ້ວຍ ທິດສະດີແຮງຈູງໃຈ (Motivation Theory) ຂອງ Porter & Lawler, (1968) ທີ່ເວົ້າວ່າ ຜົນສຳເລັດ ບໍ່ໄດ້ຂຶ້ນກັບຄວາມພ້ອມ ຫຼື ຄວາມພະຍາຍາມ ພຽງຢ່າງດຽວ, ແຕ່ຕ້ອງຂຶ້ນກັບ ການຮັບຮູ້ບົດບາດ ແລະ ພື້ນຖານຄວາມສາມາດ , ການທີ່ມີກຽນອ່ານບໍ່ຄ່ອງແຄ່ວ ອາດມີສາເຫດມາຈາກຂໍ້ຈຳກັດດ້ານບໍລິບົດພາສາ ເຊັ່ນ: ກຸ່ມເດັກຊົນເຜົ່າ ທີ່ບໍ່ໄດ້ໃຊ້ພາສາລາວເປັນພາສາຫຼັກຢູ່ເຮືອນເຮັດໃຫ້ເກີດຄວາມຫຼຸດໂຕນດ້ານຄວາມສາມາດໃນການຜັນສຽງ ແລະ ຈັບໃຈຄວາມ.

2) ປັດໄຈພາຍໃນ ມີຄ່າສະເລ່ຍສູງທີ່ສຸດ ($\mu = 4.35, \sigma = 0.40$) ສົ່ງຜົນຕໍ່ການອ່ານ ແລະ ການຮຽນຮູ້ໃນລະດັບຫຼາຍ. ເມື່ອເຈາະເລິກຂໍ້ທີ່ມີຄ່າສະເລ່ຍສູງສຸດ ພົບວ່າ ຄູມີຄວາມກະຕືລືລົ້ນໃນການສອນ ແລະ ສອນດ້ວຍຄວາມຮັບຜິດຊອບສູງ ($\mu = 4.82, \sigma = 0.66$) ແລະ ຄູເປັນແບບຢ່າງທີ່ດີແກ່ນັກຮຽນ ($\mu = 4.75, \sigma = 0.48$) ຖືກແປຜົນຢູ່ໃນລະດັບຫຼາຍທີ່ສຸດ, ສິ່ງນີ້ສະທ້ອນໃຫ້ເຫັນວ່າ ຄູສອນພາສາລາວສ່ວນໃຫຍ່ມີຈິດວິນຍານຄວາມເປັນຄູສູງ, ມີຄວາມພ້ອມດ້ານຄຸນລັກສະນະ ແລະ ຄວາມຕັ້ງໃຈຢ່າງເຕັມສ່ວນ ເຊິ່ງສອດຄ່ອງກັບ ຜົນການຄົ້ນຄວ້າຂອງ Deelivong et al. (2025) ພົບວ່າ ການສິດສອນຂອງຄູຊັ້ນມັດທະຍົມຢູ່ຫຼວງພະບາງ ໂດຍລວມແລ້ວ ການສອນຂອງຄູຢູ່ໃນສະດັບດີ ມີຄ່າ (μ =3.63; σ=0.71) ພ້ອມນັ້ນ, ຍັງສອດຄ່ອງກັບ ທິດສະດີການຮຽນຮູ້ທາງສັງຄົມ (Social Learning Theory) ຂອງ Bandura (1977) ທີ່ເນັ້ນວ່າ ພຶດຕິກຳຕົວແບບ (Modeling) ຂອງຄູ ມີອິດທິພົນສູງສຸດໃນການຊັກຈູງ ແລະ ສ້າງພຶດຕິກຳການຮຽນຮູ້ໃຫ້ແກ່ນັກຮຽນ, ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດໃນດ້ານນີ້ຄື ຄວາມພຽງພໍຂອງສື່ການສອນ ເຊັ່ນ LCD, ຄອມພິວເຕ, ເຄື່ອງຫຼິ້ນ CD ແລະ ຮູບພາບປະກອບ

ການສອນ ($\mu = 3.16, \sigma = 1.15$) ເຊິ່ງຕົກຢູ່ໃນລະດັບປານກາງ. ໝາກຜົນນີ້ຊີ້ໃຫ້ເຫັນເຖິງຈຸດອ່ອນດ້ານການບໍລິຫານໂຄງສ້າງພື້ນຖານ ທີ່ໂຮງຮຽນປະຖົມໃນ ສປປ ລາວ ຍັງຂາດແຄນສື່ເຕັກໂນໂລຊີ ແລະ ອຸປະກອນທັດສະນູປະກອນໃນການຊ່ວຍສອນ. ໃນທາງຈິດຕະສາດການສຶກສາ ໂດຍສະເພາະ ທິດສະດີການພັດທະນາສະຕິປັນຍາຂອງ Piaget, (1976) ເດັກໃນໄວປະຖົມ (Concrete Operational Stage) ຍັງຕ້ອງການການຮຽນຮູ້ຜ່ານຮູບປະທຳ ທີ່ເບິ່ງເຫັນ ແລະ ຈັບຕ້ອງໄດ້. ການຂາດແຄນສື່ຮູບພາບຈຶ່ງເປັນອຸປະສັກເຮັດໃຫ້ເດັກບໍ່ສາມາດພັດທະນາການຈິນຕະນາການ ແລະ ຄວາມເຂົ້າໃຈໃນການອ່ານຄຳສັບຍາກໄດ້ດີເທົ່າທີ່ຄວນ.

3) ປັດໄຈພາຍນອກມີຄ່າສະເລ່ຍໜ້ອຍທີ່ສຸດ ແຕ່ຍັງຄົງຢູ່ໃນເກນສູງ ($\mu = 3.85, \sigma = 0.57$) ສິ່ງຜົນໃນລະດັບຫຼາຍ. ສອດຄ່ອງກັບຜົນການຄົ້ນຄວ້າຂອງ Kumthong, (2025) ພົບວ່າ ປັດໄຈທີ່ມີອິດທິພົນ ໄດ້ແກ່ ປັດໄຈດ້ານບຸກຄົນ ຄອບຄົວ ຄູຜູ້ສອນ ແລະ ສະພາບແວດລ້ອມເອື້ອຕໍ່ການຮຽນຮູ້ ໂດຍລວມຢູ່ໃນລະດັບຫຼາຍ. ດັ່ງນັ້ນ, ການສຶກສາຄັ້ງນີ້ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ຄອບຄົວໃຫ້ກຳລັງໃຈນ້ອງໃນການຮຽນສະເໝີ ($\mu = 4.17, \sigma = 0.75$) ແລະ ຄອບຄົວເຫັນຄວາມສຳຄັນຂອງການຮຽນພາສາລາວ ($\mu = 4.14, \sigma = 0.79$). ສິ່ງນີ້ສະທ້ອນໃຫ້ເຫັນວ່າ ຜູ້ປົກຄອງໃນປັດຈຸບັນມີທັດສະນະຄະຕິທີ່ດີຕໍ່ການສຶກສາ ແລະ ພ້ອມທີ່ຈະເປັນ ແຮງຈູງໃຈພາຍນອກ ດ້ານຈິດໃຈໃຫ້ແກ່ລູກ ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດ ແລະ ເປັນຈຸດທີ່ຕ້ອງລະວັງຄື ຮ້ານບັນເທີງ, ຮ້ານເກມ ແລະ ອື່ນໆ ອ້ອມຂ້າງໂຮງຮຽນທີ່ມີຜົນຕໍ່ການຮຽນ ($\mu = 3.16, \sigma = 1.45$) ເຊິ່ງຕົກຢູ່ໃນລະດັບປານກາງ ແລະ ມີຄ່າ σ ສູງທີ່ສຸດ (1.45) ບົ່ງບອກວ່າຄວາມຄິດເຫັນມີຄວາມແຕກຕ່າງກັນສູງ ໂດຍສະເພາະໂຮງຮຽນໃນຕົວເມືອງໃຫຍ່ ອາດຈະໄດ້ຮັບຜົນກະທົບຈາກສິ່ງມົ່ນເມົາເຫຼົ່ານີ້ຫຼາຍກວ່າໂຮງຮຽນໃນເຂດຊົນນະບົດ. ສິ່ງນີ້ສອດຄ່ອງກັບ ທິດສະດີລະບົບນິເວດວິທະຍາ (Ecological Systems Theory) ຂອງ Bronfenbrenner, (1979) ທີ່ໄດ້ອະທິບາຍວ່າ ສະພາບແວດລ້ອມລະດັບຈຸລະພາກ ເຊັ່ນ ສິ່ງອຳນວຍຄວາມສະດວກ ຫຼື ສິ່ງແວດລ້ອມ ອ້ອມຂ້າງໂຮງຮຽນ ຫາກຂາດການຄວບຄຸມຈະສົ່ງຜົນກະທົບໂດຍກົງຕໍ່ສະມາທິ, ຄວາມສົນໃຈ ແລະ ພຶດຕິກຳການຮັກການອ່ານຂອງນັກຮຽນ.

5. ສະຫຼຸບ

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການອ່ານພາສາລາວ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 (ປ.5) ຢູ່ ສປປ ລາວ ໂດຍຜ່ານການປະເມີນຂອງກຸ່ມເປົ້າໝາຍ (ຄູສອນ ແລະ ຜູ້ບໍລິຫານ) ຈຳນວນ 372 ທ່ານພົບຜົນຂອງການວິເຄາະຂໍ້ມູນມີ 3 ປັດໄຈ ສາມາດສະຫຼຸບໄດ້ດັ່ງນີ້:

1. ປັດໄຈພາຍໃນ ມີຄ່າສະເລ່ຍສູງທີ່ສຸດ ($\mu = 4.35, \sigma = 0.40$) ສິ່ງຜົນໃນລະດັບຫຼາຍ. ຈຸດແຂງທີ່ສຳຄັນແມ່ນ ຄູສອນມີຄວາມກະຕືລືລົ້ນໃນການສອນ, ສອນດ້ວຍຄວາມຮັບຜິດຊອບສູງ ($\mu = 4.82$) ແລະ ເປັນແບບຢ່າງທີ່ດີແກ່ນັກຮຽນ ($\mu = 4.75$) ເຊິ່ງຕົກຢູ່ໃນລະດັບຫຼາຍທີ່ສຸດ. ຢ່າງໃດກໍຕາມ, ຈຸດອ່ອນທີ່ເປັນຂໍ້ຈຳກັດຫຼັກໃນດ້ານນີ້ຄື ຄວາມຂາດແຄນສື່ການສອນເຕັກໂນໂລຊີ ແລະ ອຸປະກອນທັດສະນູປະກອນ (ເຊັ່ນ: LCD, ຄອມພິວເຕີ, ຮູບພາບປະກອບ) ເຊິ່ງມີຄ່າສະເລ່ຍຕ່ຳສຸດ ($\mu = 3.16$) ຢູ່ໃນລະດັບປານກາງ.

2. ປັດໄຈດ້ານຜູ້ຮຽນມີຄ່າສະເລ່ຍຮອງລົງມາ ($\mu = 3.92, \sigma = 0.56$) ສິ່ງຜົນໃນລະດັບຫຼາຍ. ຂໍ້ຄົ້ນຄວ້າພົບວ່າ ນັກຮຽນສ່ວນໃຫຍ່ມີຄວາມພ້ອມດ້ານສຸຂະພາບກາຍທີ່ດີ ($\mu = 4.36$) ແລະ ມີສຸຂະພາບໃຈທີ່ດີ ($\mu = 4.27$). ເຖິງຢ່າງໃດກໍຕາມ, ບັນຫາຫຼັກທີ່ເປັນຕົວຊີ້ວັດຄວາມສາມາດຕົວຈິງຄື "ນັກຮຽນອ່ານພາສາລາວໄດ້ຄ່ອງແຄ່ວ" ພົບວ່າມີຄ່າສະເລ່ຍຕ່ຳສຸດໃນດ້ານນີ້ ($\mu = 3.44$) ເຊິ່ງສະທ້ອນໃຫ້ເຫັນວ່າ ຄວາມສາມາດໃນການອ່ານຕົວຈິງຂອງເດັກຍັງຄົງເປັນບັນຫາທີ່ຕ້ອງໄດ້ຮັບການພັດທະນາຢ່າງຮີບດ່ວນ.

3. ປັດໄຈພາຍນອກມີຄ່າສະເລ່ຍໜ້ອຍທີ່ສຸດ ແຕ່ຍັງຄົງຢູ່ໃນລະດັບຫຼາຍ ($\mu = 3.85, \sigma = 0.57$). ໂດຍພົບວ່າ ຄອບຄົວສ່ວນໃຫຍ່ເຫັນຄວາມສຳຄັນ ແລະ ໃຫ້ກຳລັງໃຈແກ່ເດັກໃນການຮຽນສະເໝີ ($\mu = 4.17$). ແຕ່ໃນຂະນະດຽວກັນ, ປັດໄຈສ່ຽງຈາກສະພາບແວດລ້ອມພາຍນອກ ເຊັ່ນ: ຮ້ານບັນເທີງ, ຮ້ານເກມ ແລະ ສິ່ງມອມເມົາອ້ອມຂ້າງໂຮງຮຽນ ຍັງຄົງເປັນສິ່ງລົບກວນ ທີ່ມີຜົນກະທົບຕໍ່ສະມາທິ ແລະ ການຮຽນຂອງນັກຮຽນ ($\mu = 3.16$) ຢູ່ໃນລະດັບປານກາງ.

ໂຮງຮຽນ ຫຼື ຄູສອນ ມີຄວາມພ້ອມດ້ານຄຸນລັກສະນະ ແລະ ຈິດວິນຍານຄວາມເປັນຄູສູງ ແຕ່ຫາກຍັງຂາດແຄນສື່ການສອນທີ່ທັນສະໄໝ ແລະ ຂາດການຄວບຄຸມສະພາບແວດລ້ອມ/ສິ່ງລົບກວນພາຍນອກ, ມັນກໍຈະສົ່ງຜົນເຮັດໃຫ້ນັກຮຽນຍັງຄົງປະສົບບັນຫາອ່ານພາສາລາວບໍ່ຄ່ອງແຄ້ວ. ດັ່ງນັ້ນ, ການຍົກລະດັບຄວາມສາມາດໃນການອ່ານຂອງນັກຮຽນ ປ.5 ຈຶ່ງຮຽກຮ້ອງຕ້ອງການຄວາມຮ່ວມມືແບບຈາກທັງພາກລັດໃນການສະໜັບສະໜຸນສື່), ໂຮງຮຽນ ການປັບປຸງວິທີການສອນ ແລະ ຄອບຄົວ ການຕິດຕາມດູແລຢ່າງໃກ້ຊິດ.

6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມນັກຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ.

7. ເອກະສານອ້າງອີງ

Bronfenbrenner, U. (1979). *The ecology of human development: Experiments by nature and design*. Harvard University Press.

Bandura, A. (1977). *Social learning theory*. Englewood Cliffs, NJ: Prentice Hall.

Best, J. W. (1977). *Research in education* (3rd ed.). Englewood Cliffs, N.J.: Prentice-Hall.

Deelivong, S., Keoboualapheth, S., khotsaigno, S., Phanthachit, S., & Vandalak, P. (2026). School Administration and Its Effects on Teaching Quality of Secondary School Teachers in Luang Prabang Province. *Souphanouvong University Journal Multidisciplinary Research and Development, 11* (Special Issue, 154–160. https://doi.org/10.69692/SUJMRD11Special154

Kumthong, P & Morsin, P. (2025). The Study of factors Thai Language Literacy of Grade 1 Students in Rayong Primary Educational Service Area Office 1. *Journal of Scholar Community*, *3*(4), 108–122. retrieved from https://so12.tci-thaijo.org/index.php/watmahasawat_jsc/article/view/3013

Maslow, A. H. (1954). *Motivation and personality*. Harper & Row.

Ministry of Education and Sports. (2010). *Primary education curriculum*. Research Institute for Educational Sciences.

Ministry of Education and Sports. (2021). *The 9th Five-Year Education and Sports Sector Development Plan (2021-2025)*. Department of General Education. http://www.moes.edu.la/dge/esdp.php

United Nations in Lao PDR. (2017). *Sustainable Development Goals*. Round Table Process. https://rtm.org.la/

Ministry of Education and Sports (2024). *Summary Report on the Implementation of the Education and Sports Sector Development Plan for the Academic Year 2023–2024 and the Education and Sports Development Plan for the Academic Year 2024–2025, Vientiane Capital.*

National Assembly. (2016). *National Human Resource Development Strategy until*.

Office of the Central Committee of the Party. (2021). *Documents of the 11th National Congress of the Lao People's Revolutionary Party*. State Printing House.

Piaget, J. (1976). Piaget's theory. In *Piaget and his school* (pp. 11–23). Springer. https://doi.org/10.1007/978-3-642-46323-5_2

Porter, L. W., & Lawler, E. (1968). *Managerial attitudes and performance*. Irwin-Dorsey.

Vathanavong, T. Kuruda, A., & Vathanavong, P. (2021). The Effectiveness of Training for Enhancing the Competencies in the 21st Century Skills-Based Learning in the New Normal Situations. *The 2nd National Conference on Educational Research (NCER II)*. Published by: Faculty of Education, Souphanouvong University, Luang Prabang, 2021.

Lao PDR MoES & UNICEF (2022). Student Learning Assessment Report for Grade 5 in the Lao PDR, Vientiane Capital.